ຂ່າວຜົນສຳເລັດການທອດກອງມະຫາກະຖິນ ແລະ ຜ້າປ່າສາມັກຄີ ຢູ່ ສປປລາວ ປະຈຳປີ 2023

--------------------

ປີ 2023, ພາຍໃນມີ ຍາທ່ານ ພຣະຄູ ວິນັຍທອນ ສວັສດ໌, ປະທານຄະນະສົງເຖຣະວາດລາວປະເທດຝຣັ່ງ ພ້ອມດ້ວຍບັນດາວັດລາວປະຈຳປະເທດຝຣັ່ງ, ພາຍນອກມີ ສະຖານເອກອັກຄະລັດຖະທູດແຫ່ງ ສປປລາວ ປະຈຳປະເທດຝຣັ່ງ-ປະເທດແບນຊິກ-ປະເທດສະວິດ, ກຳມະການແນວລາວສ້າງຊາດ, ສຳພັນຄົນລາວປະຈຳປະເທດຝຣັ່ງ, ພີ່ນ້ອງຄົນເຊື້ອຊາດລາວປະເທດຝຣັ່ງ, ປະເທດແບນຊິກ, ປະເທດສະວິດ ໄດ້ມີສັດທາໄປທອດກອງມະຫາກະຖິນ ແລະ ຜ້າປ່າສາມັກຄີຢູ່ ສປປລາວ ເຊິ່ງກິດຈະກຳຕ່າງໆລວມມີ ຕັ້ງກອງມະຫາກະຖິນຢູ່ວັດສີສະເກດ, ນະຄອນຫລວງວຽງຈັນ, ຖວາຍຜ້າປ່າຢູ່ວັດບ້ານນາສ້າວ, ແຂວງອຸດົມໄຊ ເພື່ອສົມທົບທຶນໂຮງຮຽນປະຣິຍັດຕິທຳສົງແຂວງອຸດົມໄຊ, ທອດກອງມະຫາກະຖິນສາມັກຄີຢູ່ສອງວັດ: ວັດພະເຈົ້າສົງຄຳ, ເມືອງຫລາ, ແຂວງອຸດົມໄຊ ແລະ ວັດສີພົມ, ເມືອງຄູນ, ແຂວງຊຽງຂວາງໃນລະຫວ່າງເດືອນ ພະຈິກ 2023.

ການໄປທອດກອງມະຫາກະຖິນ ແລະ ຜ້າປ່າສາມັກຄີຄັ້ງນີ້ ໄດ້ຮັບການເປັນເຈົ້າຮ່ວມຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ອຳນາດການປົກຄອງແຂວງອຸດົມໄຊ, ແຂວງຊຽງຂວາງ ແລະ ພີ່ນ້ອງຊາວລາວຈາກຕ່າງປະເທດໂດຍສະເພາະແມ່ນຈາກປະເທດຝຣັ່ງ ແລະ ພີ່ນ້ອງຊາວລາວຢູ່ນະຄອນຫລວງວຽງຈັນ, ແຂວງອຸດົມໄຊ ແລະ ແຂວງຊຽງຂວາງໄດ້ເຂົ້າຮ່ວມຢ່າງຫລວງຫລາຍ.

ນອກຈາກການເຂົ້າຮ່ວມທອດກອງມະຫາກະຖິນ ແລະ ຜ້າປ່າສາມັກຄີດັ່ງກ່າວແລ້ວ, ພີ່ນ້ອງຊາວລາວທີ່ໄປຈາກປະເທດຝຣັ່ງ ແລະ ບາງປະເທດໃນເອີຣົບຍັງໄດ້ເຂົ້າຮ່ວມນະມັດສະການບຸນພະທາດຫລວງ ນະຄອນຫລວງວຽງຈັນ ເຊິ່ງໄດ້ເຂົ້າຮ່ວມແຫ່ຜາສາດເຜິ້ງໃນວັນທີ 26 ແລະ ຕັກບາດໃນວັນທີ 27 ພະຈິກ 2023 ຕາມລຳດັບ.

ທຸກການເຄື່ອນໄຫວຂອງພີ່ນ້ອງຊາວລາວຈາກຕ່າງປະເທດແມ່ນໄດ້ຮັບການຕ້ອນຮັບຢ່າງອົບອຸ່ນແລະສົມກຽດຈາກເຈົ້າໜ້າທີ່ທາງການ ກໍ່ຄືຈາກພີ່ນ້ອງຊາວລາວຢູ່ພາຍໃນປະເທດ ເຊິ່ງໄດ້ມີການຢ້ຽມຢາມການນຳຂອງແຕ່ລະພາກສ່ວນ, ມີການບາສີສູ່ຂວັນໃນແຕ່ລະບ່ອນ, ມີການທ່ອງທ່ຽວສະຖານທີ່ສຳຄັນ ແລະ ສະຖານທີ່ພັດທະນາເສດຖະກິດສັງຄົມບາງບ່ອນ.

ການໄປທອດກອງມະຫາກະຖິນ ແລະ ຜ້າປ່າສາມັກຄີຄັ້ງນີ້ ໄດ້ຮັບການອະນຸໂມທະນາຈາກພີ່ນ້ອງຄົນເຊື້ອຊາດລາວຢູ່ຕ່າງປະເທດ ແລະ ພີ່ນ້ອງຄົນລາວຢູ່ພາຍໃນປະເທດ ຕາມສະຖານທີ່ຈັດງານຕ່າງໆດັ່ງນີ້:

- ໄດ້ຮັບປັດໄຈໂມທະນາຈາກພີ່ນ້ອງຄົນເຊື້ອຊາດລາວທີ່ປະເທດຝຣັ່ງ, ປະເທດແບນຊິກ ແລະ ປະເທດສະວິດຈຳນວນ 705,300,360 ກີບ (ເຈັດຮ້ອຍຫ້າລ້ານ, ສາມແສນ, ສາມຮ້ອຍຫົກສິບກີບ);
- ໄດ້ຮັບປັດໄຈໂມທະນາຢູ່ວັດສີສະເກດ, ນະຄອນຫຼວງວຽງຈັນ ຈຳນວນ 231,312,500 ກີບ (ສອງຮ້ອຍສາມສິບເອັດລ້ານ, ສາມແສນສິບສອງພັນ, ຫ້າຮ້ອຍກີບ);
- ໄດ້ຮັບປັດໄຈໂມທະນາຢູ່ວັດບ້ານນາສ້າວ, ເມືອງງໄຊ, ແຂວງອຸດົມໄຊ ຈຳນວນ: 66,636,000 ກີບ (ຫົກສິບຫົກລ້ານ, ຫົກແສນສາມຫົກພັນກີບ);
- ໄດ້ຮັບປັດໄຈໂມທະນາຢູ່ວັດພະເຈົ້າສົງຄຳ, ເມືອງຫລາ, ແຂວງອຸດົມໄຊ ຈຳນວນ: 513,348,260 ກີບ (ຫ້າຮ້ອຍສິບສາມລ້ານ, ສາມແສນສີ່ສິບແປດພັນ, ສອງຮ້ອຍຫົກສິບກີບ);
- ໄດ້ຮັບປັດໄຈໂມທະນາຢູ່ວັດ ສີພົມ, ເມືອງຄູນ, ແຂວງຊຽງຂວາງ ຈຳນວນ 245,845,140 ກີບ (ສອງຮ້ອຍສີ່ສິບຫ້າລ້ານ, ແປດແສນສີ່ສິບຫ້າພັນ,ໜຶ່ງຮ້ອຍສີ່ສິບກີບ).
- ລວມປັດໄຈທັງໝົດທີ່ໄດ້ຮັບການໂມທະນາຈາກພີ່ນ້ອງຊາວລາວທັງຢູ່ຕ່າງປະເທດ ແລະ ຢູ່ພາຍໃນ

ປະເທດເປັນຈຳນວນ:705,300,360+231,312,500+66,636,000+ 513,348,260+ 245,845,140=1,762,442,260 ກີບ (ໜຶ່ງຕື້, ເຈັດຮ້ອຍຫົກສິບສອງລ້ານ, ສີ່ແສນສີ່ສິບສອງພັນ, ສອງຮ້ອຍຫົກສິບກີບ).

ນອກຈາກນີ້, ພີ່ນ້ອງຊາວລາວຈາກຕ່າງປະເທດແລະຢູ່ພາຍໃນປະເທດ ຍັງໄດ້ບໍລິຈາກເງິນຮ່ວມກັນສ້າງຫ້ອງນ້ຳຢູ່ວັດພະເຈົ້າສິງຄຳໃນຈຳນວນເງິນ 20,000,000 ກີບ ແລະ ເງິນບາດ 25,500 ບາດ; ໂມທະນາຢູ່ວັດພູທາດ, ເມືອງໄຊ, ແຂວງອຸດົມໄຊເປັນຈຳນວນເງິນ 15,000,000 ກີບ.

ໃນໂອກາດທີ່ທອດມະຫາກະຖິນ ແລະ ຖວາຍຜ້າປ່າສາມັກຄີຄັ້ງນີ້ ໄດ້ມີການຖວາຍປັດໄຈທີ່ໄດ້ບໍລິຈາດມາຈາກຕ່າງປະເທດ ແລະພາຍໃນປະເທດໃຫ້ບາງວັດ ແລະ ອົງການສົງດັ່ງນີ້:

1. ຖວາຍ ວັດສີສະເກດ, ນະຄອນຫລວງວຽງຈັນ ................................................82,000,000 ກີບ
2. ຖວາຍ ວັດບ້ານນາສ້າວ, ແຂວງອຸດົມໄຊບ່ອນຕັ້ງກອງຜ້າປ່າ ................................ 40,000,000 ກີບ
3. ຖວາຍ ເປັນເງິນບໍລິຫານອົງການພຸດທະສາສະໜາສຳພັນແຂວງອຸດົມໄຊ ....................50,000,000 ກີບ
4. ຖວາຍ ວັດພະເຈົ້າສິງຄຳ, ແຂວງອຸດົມໄຊ ......................................................60,000,000 ກີບ
5. ມອບເປັນທຶນສົມທົບໂຮງຮຽນປະຣິຍັດຕິທຳສົງແຂວງອຸດົມໄຊ............................. 325,248,860 ກີບ
6. ມອບໃຫ້ ໂຮງຮຽນເຕົ້າໂຮມ ແລະ ວັດບ້ານກໍນ້ອຍ, ແຂວງອຸດົມໄຊ..........................20,000,000 ກີບ
7. ຖວາຍວັດສີພົມ, ເມືອງຄູນ, ແຂວງຊຽງຂວາງ ...............................................150,000,000 ກີບ
8. ຖວາຍ ເປັນເງິນບໍລິຫານອົງການພຸດທະສາສະໜາສຳພັນແຂວງຊຽງຂວາງ....................50,000,000 ກີບ
9. ຖວາຍໃຫ້ວັດເມືອງປົວ, ແຂວງຫົວພັນ.......................................................... 50,000,000 ກີບ

ການໄປທອດກອງມະຫາກະຖິນ ແລະ ຜ້າປ່າສາມັກຄີ ພ້ອມທັງເຂົ້າຮ່ວມນະມັດສະການບຸນພະທາດຫລວງຂອງ ພີ່ນ້ອງຊາວລາວຄັ້ງນີ້ ນອກຈາກເປັນການຮັກສາຮີດຄອງປະເພນີອັນດີງາມຂອງຊາດລາວເຮົາ ແລະເປັນໂອກາດໃຫ້ພີ່ນ້ອງໄດ້ກັບໄປຢ້ຽມຢາມບ້ານເກີດເມືອງນອນແລ້ວ ຍັງເປັນການປະກອບສ່ວນທຶນຮອນເຂົ້າໃນການປະຕິສັງຂອນວັດວາສາສະໜາ ກໍ່ຄືການພັດທະນາປະເທດຊາດ ທັງທາງກົງ ແລະ ທາງອ້ອມ.

ໃນໂອກາດນີ້, ສະຖານເອກອັກຄະລັດຖະທູດ ແຫ່ງ ສປປລາວ ປະຈຳປະເທດຝຣັ່ງ ພ້ອມດ້ວຍທຸກພາກສ່ວນກ່ຽວຂ້ອງຂອງລາວ ຂໍສະແດງຄວາມອະນຸໂມທະນາ ແລະ ຄວາມຂອບໃຈຢ່າງສູງມາຍັງເຈົ້າສັດທາທຸກພາກສ່ວນທັງພາຍໃນແລະຕ່າງປະເທດ ໂດຍສະເພາະແມ່ນພີ່ນ້ອງຈາກປະເທດຝຣັ່ງ, ປະເທດແບນຊິກ ແລະ ປະເທດສະວິດ ທີ່ໄດ້ເສຍສະຫລະທັງກຳລັງຊັບ, ກຳລັງກາຍ ເຮັດໃຫ້ງານທອດກອງມະຫາກະຖິນ ແລະ ຖວາຍຜ້າປ່າສາມັກຄີຄັ້ງນີ້ໄດ້ສຳເລັດຜົນຢ່າງຈົບງາມ ແລະ ຂໍນົບນ້ອມເອົາຄຸນພຣະສຣີຣັຕນຕຣັຍ ແລະ ສິ່ງສັກສິດຢູ່ໃນສາກົນລະໂລກໄດ້ມາປະສິດປະສາດມະຫາພອນໄຊອັນປະເສີດໃຫ້ເຈົ້າສັດທາທຸກໆທ່ານ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກ ແລະ ມີຄວາມຈະເລີນກ້າວໜ້າຮັ່ງມີຕະຫລອດທົ່ວເຖິງກັນໝົດທຸກໆຄົນດ້ວຍເຖີ້ນ ສາທຸ ສາທຸ ສາທຸ.